ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ
ຫ້ອງການປະສານງານໂຄງການ
ໂຄງການ ຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ ປະຈຳແຂວງໄຊຍະບູລີ

ເລກທີ : 1961 / ກປ່ຊ.ຊບ
ວັນທີ: 10/06/2021

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ບັນດາບໍລິສັດກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ທີ່ນັບຖື,

1. ພະແນກກະສິກຳ ແລະ ປ່າໄມ້ ແຂວງ ໄຊຍະບູລີ ໂຄງການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວ ໄດ້ຮັບອະນຸມັດງົບປະມານທຶນກູ້ຢືມຈາກທະນາຄານໂລກ ເລກທີ **P 61473** ເພື່ອດຳເນີນການ ສ້ອມແປງຊົນລະປະທານຝາຍນ້ຳຕານ ດ້ວຍການປະມູນສົມທຽບລາຄາ ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບໂຄງການ ສ້ອມແປງຊົນລະປະທານຝາຍນ້ຳຕານ ດັ່ງກ່າວ. ໄລຍະການກໍ່ສ້າງ ແລະ ການສ້ອມແປງແມ່ນ 150 ວັນ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019.
4. ຊອງປະມູນຕ້ອງສົ່ງທີ່ຫ້ອງການປະສານງານໂຄງການ ຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ ປະຈຳແຂວງໄຊຍະບູລີ, ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ, ຢູ່ທີ່ ບ້ານສີມຸງຄຸນ ເມືອງໄຊຍະ ແຂວງໄຊຍະບູລີ ໂທລະສັບ 074 211084/074 212005, ກ່ອນເວລາ 10:00 ໂມງຂອງວັນທີ 6-7-2021 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 10:15 ໂມງ ໃນວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ ທີ່ສົນໃຈຢາກເຂົ້າຮ່ວມ.

ຂໍສະແດງຄວາມນັບຖື

ຫົວໜ້າພະແນກ

ພະແນກ ກະສິກຳແລະປ່າໄມ້ ແຂວງໄຊຍະບູລີ

ຄຳເກິ່ງ ພັນລັກ
Khamkeung PHANLACK